ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0266 /ອຄ.ກອຫ
ນະຄອນຫຼວງວຽງຈັນ, ວັນທີ 15 MAR 2019

# ຂໍ້ຕົກລົງ
## ວ່າດ້ວຍມາດຕະຖານໂຮງງານຂ້າສັດ

- ອີງຕາມກົດໝາຍວ່າດ້ວຍ ອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017.
- ອີງຕາມໜັງສືສະເໜີຂອງກົມອຸດສາຫະກຳ ແລະ ຫັດຖະກຳ ສະບັບເລກທີ 91/ກອຫ.ຄຣ, ລົງວັນທີ 21 ມັງກອນ 2019.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ຫຼັກການທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບມາດຕະຖານການສ້າງຕັ້ງ ແລະ ການເຄື່ອນໄຫວຂອງໂຮງງານຂ້າສັດ ເພື່ອຄຸ້ມຄອງ ແລະ ສົ່ງເສີມໂຮງງານໃຫ້ໄດ້ມາດຕະຖານ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ ດັດສົມ, ປັບປຸງ ແລະ ຍົກລະດັບສະມັດຕະພາບການຜະລິດ, ຜະລິດຕະພັນ ມີຄຸນນະພາບ, ໄດ້ມາດຕະຖານ, ສະອາດ, ມີຄວາມປອດໄພຕໍ່ຜູ້ບໍລິໂພກ ປະກອບສ່ວນສົ່ງເສີມການຜະລິດເປັນສິນຄ້າ ແລະ ຄໍ້າປະກັນສະບຽງອາຫານ.

**ມາດຕາ 2 ມາດຕະຖານໂຮງງານຂ້າສັດ**

ມາດຕະຖານໂຮງງານຂ້າສັດ ແມ່ນການກຳນົດຄຸນລັກສະນະທາງດ້ານມາດຕະຖານເຕັກນິກ ຂອງໂຮງງານຂ້າສັດ ເປັນຕົ້ນ ທີ່ຕັ້ງໂຮງງານ, ອາຄານ, ເຄື່ອງຈັກ ແລະ ອຸປະກອນ, ຂະບວນການຜະລິດ, ຜະລິດຕະພັນ, ຄວາມປອດໄພ, ສຸຂານາໄມ, ສິ່ງແວດລ້ອມ ແລະ ລະບົບການຄຸ້ມຄອງບໍລິຫານ ໂຮງງານ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ໂຮງງານຂ້າສັດ ໝາຍເຖິງ ສະຖານທີ່ ຫຼື ໂຮງງານ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການກ່ຽວກັບການຂ້າ, ຄົວ ແລະ ຕັດແຕ່ງຊິ້ນສ່ວນຂອງສັດ ເປັນຕົ້ນ ງົວ, ຄວາຍ, ໝູ ໃຫ້ເປັນຜະລິດຕະພັນ ຊຶ່ງສາມາດເອົາໄປ

ຈຳໜ່າຍເປັນສິນຄ້າໄດ້ ຕາມເລກລະຫັດ (LSIC) 1011, 1012 ແລະ 1013 ຂອງລະຫັດສາລະບານການຈັດແບ່ງຂະແໜງເສດຖະກິດຂອງ ສປປ ລາວ.

2. **ລະບົບຕ່ອງໂສ້** ໝາຍເຖິງ ຂະບວນການຜະລິດຕາມລຳດັບ ເລີ່ມແຕ່ນຳສັດເຂົ້າມາໃນໂຮງງານຜ່ານຂະບວນການຂ້າ, ຄືວ ແລະ ຕັດແຕ່ງຊິ້ນສ່ວນຂອງສັດ ຈົນເປັນຜະລິດຕະພັນ.

3. **ລະບົບລຳລຽງດ້ວຍສາຍພານ ຫຼື ໂສ້** ໝາຍເຖິງ ລະບົບການເຄື່ອນຍ້າຍຊິ້ນສ່ວນຂອງສັດພາຍໃນໂຮງງານແບບຕໍ່ເນື່ອງ ຈາກຂອດໜຶ່ງໄປຍັງອີກຂອດໜຶ່ງ.

4. **ການຄືວ ແລະ ຕັດແຕ່ງຊິ້ນສ່ວນຂອງສັດ** ໝາຍເຖິງ ການແຍກ ແລະ ຊອຍ ຈາກຊິ້ນສ່ວນໃຫຍ່ມາເປັນຊິ້ນສ່ວນນ້ອຍ ຕາມຄວາມຕ້ອງການຂອງຕະຫຼາດ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນກິດຈະການໂຮງງານຂ້າສັດທຸກຂະໜາດ ຢູ່ ສປປ ລາວ.

## ໝວດທີ 2
## ມາດຕະຖານ ແລະ ເງື່ອນໄຂ ຂອງໂຮງງານຂ້າສັດ

**ມາດຕາ 5 ການແບ່ງມາດຕະຖານໂຮງງານຂ້າສັດ**

ໂຮງງານຂ້າສັດ ໄດ້ແບ່ງອອກເປັນ ສອງມາດຕະຖານ ຄື:

1. ມາດຕະຖານທີ 1 ແມ່ນໂຮງງານທີ່ນຳໃຊ້ກຳລັງແຮງເຄື່ອງຈັກແຕ່ 10 ແຮງມ້າ ຫຼື ແຮງງານຄົນ 10 ຄົນ ຫຼື ຂ້າສັດ 30 ໂຕຕໍ່ວັນ ຂຶ້ນໄປ ໂດຍນຳໃຊ້ເຄື່ອງຈັກເປັນຕົ້ນຕໍ.

2. ມາດຕະຖານທີ 2 ແມ່ນໂຮງງານທີ່ນຳໃຊ້ກຳລັງແຮງເຄື່ອງຈັກຕ່ຳກວ່າ 10 ແຮງມ້າ ຫຼື ແຮງງານຄົນ ຕ່ຳກວ່າ 10 ຄົນ ຫຼື ຂ້າສັດ ຕ່ຳກວ່າ 30 ໂຕຕໍ່ວັນລົງມາ ໂດຍນຳໃຊ້ແຮງງານຄົນເປັນຕົ້ນຕໍ.

**ມາດຕາ 6 ການດຳເນີນກິດຈະການໂຮງງານຂ້າສັດ**

ການຂໍອະນຸຍາດສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານຂ້າສັດ ໃຫ້ປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ. ສ່ວນເງື່ອນໄຂ ແລະ ມາດຕະຖານ ແມ່ນໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້.

**ມາດຕາ 7 ເງື່ອນໄຂ ແລະ ມາດຕະຖານໂຮງງານຂ້າສັດ**

ເງື່ອນໄຂ ແລະ ມາດຕະຖານໂຮງງານຂ້າສັດ ປະກອບມີ ດັ່ງນີ້:

1. ທີ່ຕັ້ງໂຮງງານ;
2. ສິ່ງປຸກສ້າງໃນໂຮງງານ;
3. ອາຄານໂຮງງານ;
4. ເຄື່ອງຈັກ ແລະ ອຸປະກອນ;
5. ວັດຖຸດິບ;
6. ຂະບວນການຂ້າຄືວສັດ;
7. ຜະລິດຕະພັນ;
8. ການເກັບຮັກສາ;
9. ການຂົນສົ່ງ;

10. ພະນັກງານບໍລິຫານ ແລະ ວິຊາການສະເພາະດ້ານ;

11. ຄວາມປອດໄພ ແລະ ສຸຂານາໄມໂຮງງານ;

12. ສິ່ງແວດລ້ອມໂຮງງານ.

**ມາດຕາ 8 ທີ່ຕັ້ງໂຮງງານ**

ໂຮງງານຂ້າສັດຕ້ອງຕັ້ງຢູ່ສະຖານທີ່ເໝາະສົມ, ມີບ່ອນພັກສັດ ຫຼື ຄອກສັດພຽງພໍ ແລະ ເໝາະສົມກັບກິດຈະການ, ເສັ້ນທາງເຂົ້າ-ອອກ ຕ້ອງສະດວກ, ບໍ່ກີດຂວາງການສັນຈອນ, ຮັບປະກັນບໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ຕ້ອງຕັ້ງຢູ່ຫ່າງໄກຈາກເຂດຫວງຫ້າມທາງການຢ່າງໜ້ອຍ 500 ແມັດຂຶ້ນໄປ ເປັນຕົ້ນ ໂຮງຮຽນ, ໂຮງໝໍ, ວັດ, ແຫຼ່ງວັດທະນາທຳ, ເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ປ່າສະຫງວນ, ປ່າປ້ອງກັນ, ປ່າຜະລິດ, ແຫຼ່ງຕົ້ນນ້ຳ, ເຂດອະນຸລັກຊີວະນາໆພັນ ແລະ ປະຕິບັດຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 9 ສິ່ງປຸກສ້າງໃນໂຮງງານ**

ພາຍໃນໂຮງງານຕ້ອງຈັດໃຫ້ມີ ຮົ້ວອ້ອມໂຮງງານ, ຫ້ອງການບໍລິຫານ, ຄອກສັດ ຫຼື ສະຖານທີ່ພັກສັດ, ທາງຍ່າງແຕ່ຄອກສັດໄປຫາບ່ອນຂ້າ, ອາຄານໂຮງງານ, ຫ້ອງອາຫານ, ບ່ອນພັກຜ່ອນຂອງພະນັກງານ, ຫ້ອງນ້ຳ, ຫ້ອງປ່ຽນເຄື່ອງນຸ່ງ, ລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອ ແລະ ສິ່ງປຸກສ້າງອື່ນ ທີ່ຈຳເປັນ.

**ມາດຕາ 10 ອາຄານໂຮງງານ**

ອາຄານໂຮງງານຂ້າສັດ ຕ້ອງມີມາດຕະຖານຕົ້ນຕໍ ດັ່ງນີ້:

ກ. ມາດຕະຖານທີ 1

1. ອາຄານໂຮງງານ ຕ້ອງມີ ເນື້ອທີ່ຢ່າງໜ້ອຍ 500 ຕາແມັດ ຂຶ້ນໄປ, ໂຄງສ້າງແໜ້ນໜາແຂງແຮງ, ເສົາເຮັດດ້ວຍເບຕົງ ຫຼື ເສົາເຫຼັກ ທີ່ທົນທານຖາວອນ, ພື້ນເຮັດດ້ວຍເບຕົງ ຕິດກະໂລໃສ່ບ່ອນຄົວສັດ ແລະ ສາງເຢັນ, ຫຼັງຄາມຸງດ້ວຍ ກະເບື້ອງ, ສັງກະສີ ຫຼື ອາລູຊິງ, ຄວາມສູງແຕ່ພື້ນຫາເພດານ 4 ແມັດ ຂຶ້ນໄປ ໂດຍກໍ່ສ້າງຖືກຕ້ອງຕາມການອອກແບບ ແລະ ຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກອາຄານໂຮງງານ ຈາກບໍລິສັດອອກແບບກໍ່ສ້າງທີ່ໄດ້ຮັບອະນຸຍາດຖືກຕ້ອງ. ອາຄານໂຮງງານຕ້ອງເປັນລະບົບປິດ, ຝາຕ້ອງກໍ່, ໂບກ ແລະ ຕິດກະໂລ່ ຫຼື ທາສີປ້ອງກັນເຊື້ອລາ;

2. ຕ້ອງມີພື້ນທີ່ອາຄານໃຫ້ເປັນລະບົບຕ່ອງໂສ້ຂອງການຜະລິດ, ເປັນລະບຽບຮຽບຮ້ອຍດີ, ມີຄວາມສະອາດ ແລະ ຖືກຕ້ອງຕາມຫຼັກການຄວາມປອດໄພ ສຸຂານາໄມໂຮງງານ;

3. ຕ້ອງມີທາງເຂົ້າ ເພື່ອນຳເອົາສັດເຂົ້າໄປບ່ອນຂ້າ ຄົວສັດ ແລະ ທາງອອກ ເພື່ອນຳເອົາຊີ້ນ ຫຼື ຊີ້ນສ່ວນຕ່າງໆ ຂອງສັດອອກໄປຈຳໜ່າຍ;

4. ຕ້ອງມີລະບົບແສງສະຫວ່າງ ແລະ ລະບົບຖ່າຍເທອາກາດໃຫ້ພຽງພໍ;

5. ຕ້ອງມີປະຕູທາງອອກສຸກເສີນ ທີ່ເໝາະສົມ;

6. ຕ້ອງມີນ້ຳໃຊ້ ທີ່ສະອາດ ແລະ ພຽງພໍ.

ຂ. ມາດຕະຖານທີ 2

1. ອາຄານໂຮງງານ ຕ້ອງມີ ເນື້ອທີ່ ຢ່າງໜ້ອຍ 200 ຕາແມັດຂຶ້ນໄປ, ໂຄງສ້າງແໜ້ນໜາແຂງແຮງ, ເສົາເຮັດດ້ວຍເບຕົງ ຫຼື ເຫຼັກ ຫຼື ອື່ນໆ ທີ່ທົນທານຖາວອນ, ພື້ນເຮັດດ້ວຍເບຕົງ ແລະ ຂັດມັນ ຫຼື ຕິດກະໂລ ໃສ່ບ່ອນຄົວ, ຫຼັງຄາມຸງດ້ວຍກະເບື້ອງ ຫຼື ສັງກະສີ ຫຼື ອາລູຊິງ, ຄວາມສູງແຕ່ພື້ນຫາເພດານ 3,5 ແມັດ ຂຶ້ນໄປ, ໂດຍກໍ່ສ້າງຖືກຕ້ອງຕາມການອອກແບບ ແລະ ຕ້ອງໄດ້ຮັບການຢັ້ງຢືນດ້ານເຕັກນິກອາຄານໂຮງງານ ຈາກບໍລິສັດອອກແບບກໍ່

ສ້າງ ທີ່ໄດ້ຮັບອະນຸຍາດຖືກຕ້ອງ. ອາຄານໂຮງງານຈະເປັນລະບົບເປີດ ຫຼື ລະບົບປິດກໍໄດ້, ນອກຈາກມາດຕະຖານທີ່ກ່າວມາຂ້າງເທິງແລ້ວ ຝາ ຕ້ອງກໍ່ ແລະ ໂບກ ຫຼື ຕິດກະໂລ ຫຼື ທາສີປ້ອງກັນເຊື້ອລາ ຫຼື ເຮັດດ້ວຍແຜ່ນອະລູຊີງ.

2. ຕ້ອງມີພື້ນທີ່ອາຄານໃຫ້ເປັນລະບຽບຮຽບຮ້ອຍດີ, ມີຄວາມສະອາດ ແລະ ຖືກຕ້ອງຕາມຫຼັກຄວາມປອດໄພສຸຂານາໄມຂອງໂຮງງານ;

3. ຕ້ອງມີທາງເຂົ້າ ເພື່ອນໍາເອົາສັດເຂົ້າໄປບ່ອນຂ້າ ຄົວສັດ ແລະ ທາງອອກ ເພື່ອນໍາເອົາຊີ້ນ ຫຼື ຊີ້ນສ່ວນຕ່າງໆຂອງສັດ ອອກໄປຈໍາໜ່າຍ;

4. ຕ້ອງມີລະບົບແສງສະຫວ່າງ ແລະ ລະບົບຖ່າຍເທອາກາດໃຫ້ພຽງພໍ;

5. ຕ້ອງມີປະຕູທາງອອກສຸກເສີນ ທີ່ເໝາະສົມ (ສໍາລັບອາຄານປິດ);

6. ຕ້ອງມີນໍ້າໃຊ້ ທີ່ສະອາດ ແລະ ພຽງພໍ.

### ມາດຕາ 11 ເຄື່ອງຈັກ ແລະ ອຸປະກອນ

ໂຮງງານຂ້າສັດ ຕ້ອງຕິດຕັ້ງເຄື່ອງຈັກ ແລະ ອຸປະກອນຕົ້ນຕໍ ດັ່ງນີ້:

**ກ. ມາດຕະຖານທີ 1**

1. ເຄື່ອງຈັກຍົກນໍ້າໜັກ;

2. ຕິດຕັ້ງກະແສໄຟຟ້າ ຫຼື ອຸປະກອນອື່ນ ເປັນຕົ້ນ ປືນລົມສໍາລັບຂ້າສັດ, ຂວານ, ຄ້ອນ, ພ້າ, ມີດ ທີ່ຖືກຕ້ອງ ຕາມເຕັກນິກ ສໍາລັບການຂ້າສັດ;

3. ອຸປະກອນສໍາລັບທໍາຄວາມສະອາດກ່ອນການຂ້າ ຫຼື ຫຼັງການຂ້າສັດ ເປັນຕົ້ນ ເຄື່ອງປັ່ນຂົນ, ກ໋ອກນໍ້າ, ທໍ່ຢາງ, ຖັງນໍ້າ, ອ່າງນໍ້າ;

4. ໝໍ້ຕົ້ມນໍ້າຮ້ອນ ຫຼື ໝໍ້ອາຍນໍ້າ;

5. ອ່າງ, ຖັງ ຫຼື ພາຊະນະບັນຈຸນໍ້າຮ້ອນ ແລະ ນໍ້າເຢັນ;

6. ເຄື່ອງຈັກ ຫຼື ອຸປະກອນ ສໍາລັບຂູດຂົນສັດ ຫຼື ເຕົາຟູ່ສໍາລັບເຜົາຂົນສັດ;

7. ລະບົບລໍາລຽງດ້ວຍສາຍພານ ຫຼື ໂສ້ ຫຼື ໂຕະລູກກິ້ງ ຫຼື ຂໍຫ້ອຍ ທີ່ເຮັດດ້ວຍວັດສະດຸທີ່ບໍ່ເຂົ້າໝ້ຽງ ແລະ ອື່ນໆ ເພື່ອລໍາລຽງຊາກສັດ ຫຼື ຫ້ອຍຊີ້ນ ແລະ ຊີ້ນສ່ວນຕ່າງໆ ໄປຕາມຂັ້ນຕອນການຜະລິດ;

8. ເຄື່ອງຈັກ ຫຼື ອຸປະກອນ ສໍາລັບຄົວສັດ ເປັນຕົ້ນ ເຄື່ອງຈັກເລື່ອຍ, ຂວານ, ພ້າ, ມີດ;

9. ໂຕະສໍາລັບຄົວສັດ ຕ້ອງເຮັດດ້ວຍ ສະແຕັນເລດ. ໃນກໍລະນີໂຕະເຮັດດ້ວຍຊີມັງຕ້ອງຕິດກະໂລ ແລະ ມີຄວາມສູງຈາກພື້ນບໍ່ຕໍ່າກວ່າ 30 ຊັງຕີແມັດ;

10. ຊີງຊັ່ງນໍ້າໜັກ.

**ຂ. ມາດຕະຖານທີ 2**

1. ລະບົບເຄື່ອງຍົກຊາກສັດຕາມຄວາມເໝາະສົມ;

2. ລະບົບລໍາລຽງຊາກສັດ ທີ່ເຮັດດ້ວຍວັດສະດຸທີ່ບໍ່ເຂົ້າໝ້ຽງ;

3. ຕິດຕັ້ງກະແສໄຟຟ້າ ຫຼື ອຸປະກອນອື່ນ ເປັນຕົ້ນ ປືນລົມສໍາລັບຂ້າສັດ, ຂວານ, ຄ້ອນ, ພ້າ, ມີດ ທີ່ຖືກຕ້ອງຕາມເຕັກນິກ ສໍາລັບການຂ້າ ແລະ ຄົວສັດ;

4. ໝໍ້ຕົ້ມນໍ້າຮ້ອນ ແລະ ພາຊະນະບັນຈຸນໍ້າຮ້ອນ ຫຼື ນໍ້າເຢັນ;

5. ເຄື່ອງຈັກ ຫຼື ອຸປະກອນ ສໍາລັບຂູດຂົນສັດ ຫຼື ເຕົາຟູ່ສໍາລັບເຜົາຂົນສັດ;

6. ອຸປະກອນສໍາລັບທໍາຄວາມສະອາດກ່ອນການຂ້າ ຫຼື ຫຼັງການຂ້າສັດ ເປັນຕົ້ນ ເຄື່ອງປັ່ນຂົນ, ກ໋ອກນໍ້າ, ທໍ່ຢາງ, ຖັງນໍ້າ, ອ່າງນໍ້າ;

7. ຊີງຊັ່ງນໍ້າໜັກ.

**ມາດຕາ 12 ການຢັ້ງຢືນ ແລະ ການເຄື່ອນຍ້າຍສັດ**

ສັດທີ່ຈະນຳເຂົ້າມາໃນໂຮງງານ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສັດທີ່ຈະນຳເຂົ້າມາຂ້າຢູ່ໃນໂຮງງານ ຕ້ອງມີໃບຢັ້ງຢືນການເຄື່ອນຍ້າຍສັດ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ;

2. ກ່ອນຈະນຳສັດເຂົ້າໄປຄອກຂັງຂອງໂຮງງານ ຕ້ອງແຈ້ງຈຳນວນສັດ, ວັນ ແລະ ເວລາ ທີ່ຈະດຳເນີນການຂ້າ ຕໍ່ເຈົ້າໜ້າທີ່ສັດຕະວະແພດ ເພື່ອຢັ້ງຢືນເປັນລາຍລັກອັກສອນ ແລ້ວຈຶ່ງສາມາດນຳສັດເຂົ້າໄປຄອກຂັງສັດຂອງໂຮງງານໄດ້;

3. ກ່ອນຈະນຳສັດອອກຈາກຄອກຂັງ ເພື່ອນຳໄປຂ້ານັ້ນ ຕ້ອງໄດ້ຜ່ານການກວດກາ ແລະ ຢັ້ງຢືນສຸຂະພາບສັດ ຈາກສັດຕະວະແພດ, ໃນກໍລະນີພົບເຫັນສັດທີ່ຈະນຳເຂົ້າໄປຂ້ານັ້ນ ເປັນພະຍາດ ຫຼື ໂລກລະບາດ ເປັນຕົ້ນ ພະຍາດເຕົ້າໂຮມເລືອດ, ພະຍາດໄຂ້ເລືອດດຳ, ພະຍາດປາກເປື່ອຍລີ້ນເລັບ, ພະຍາດອະຫິວາສັດ ຕ້ອງແຍກສັດນັ້ນອອກຈາກຄອກຂັງສັດທັນທີ ໄປໄວ້ບ່ອນອື່ນທີ່ເໝາະສົມ ພ້ອມແຈ້ງຕໍ່ເຈົ້າໜ້າທີ່ ຂະແໜງການກະສິກຳ ແລະ ປ່າໄມ້, ຂະແໜງການອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາ ແລະ ຄວບຄຸມພະຍາດລະບາດດັ່ງກ່າວ;

4. ບໍ່ອະນຸຍາດໃຫ້ນຳສັດຖືພາມານ ເຂົ້າໄປຂ້າໃນໂຮງງານ, ໃນກໍລະນີສັດຕະວະແພດກວດເຫັນຕ້ອງແຍກສັດດັ່ງກ່າວອອກໄປຂັງໄວ້ບ່ອນອື່ນທີ່ເໝາະສົມ ແລະ ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ;

5. ສັດທີ່ຂັງໄວ້ໃນຄອກ ເພື່ອລໍຖ້າຂ້າຕ້ອງໄດ້ຮັບອາຫານ ແລະ ນໍ້າກິນຢ່າງພຽງພໍ, ເນື້ອທີ່ບ່ອນຂັງສັດຕ້ອງກ້ວາງຂວາງພຽງພໍກັບຈຳນວນສັດ, ມີຄວາມສະອາດ ແລະ ບໍ່ໃຊ້ຄວາມຮຸນແຮງ ທີ່ເປັນການທໍລະມານສັດ;

**ມາດຕາ 13 ຂະບວນການຂ້າຄືວສັດ**

ໂຮງງານຂ້າສັດ ຕ້ອງສະອາດ ແລະ ເໝາະສົມ ໂດຍຮັບປະກັນຄວາມປອດໄພ ແລະ ສຸຂານາໄມ ຊຶ່ງມີຂະບວນການຂ້າຄືວ ດັ່ງນີ້:

1. ກວດສຸຂະພາບສັດກ່ອນຂ້າ;
2. ສະຖານທີ່ ແລະ ຄອກພັກສັດກ່ອນຂ້າ;
3. ເຄື່ອນຍ້າຍສັດຈາກຄອກພັກສັດຫາບ່ອນຂ້າ ໂດຍຜ່ານທາງຍ່າງສັດສະເພາະ;
4. ລະບົບທຳຄວາມສະອາດສັດກ່ອນຂ້າ;
5. ການຂ້າສັດ;
6. ການລວກນໍ້າຮ້ອນ, ຂູດຂົນ ແລະ ເຜົາຂົນສັດ;
7. ການອະນາໄມກ່ອນຄືວ;
8. ການຄືວສັດ;
9. ການທຳຄວາມສະອາດຊີ້ນ ແລະ ຊີ້ນສ່ວນຂອງສັດ;
10. ການທຳຄວາມສະອາດອຸປະກອນການຂ້າ;
11. ການຫຸ້ມຫໍ່ ຫຼື ບັນຈຸ ຊີ້ນ ແລະ ຊີ້ນສ່ວນຂອງສັດ.

**ມາດຕາ 14 ຜະລິດຕະພັນຊີ້ນ ແລະ ການຫຸ້ມຫໍ່ຊີ້ນ**

ຜະລິດຕະພັນຊີ້ນ ຂອງໂຮງງານຂ້າສັດ ຕ້ອງໄດ້ຜ່ານການກວດກາເຊື້ອພະຍາດ ແລະ ໄດ້ຮັບການຢັ້ງຢືນຄຸນນະພາບ ຈາກສັດຕະວະແພດກ່ອນການຈຳໜ່າຍ ໂດຍຈໍ້າກາໝາຍໃສ່ຜະລິດຕະພັນຊີ້ນ. ໃນກໍລະນີພົບເຫັນພະຍາດ ຫຼື ໂລກລະບາດ ຢູ່ໃນຊີ້ນ ແລະ ຊີ້ນສ່ວນຂອງສັດ ບໍ່ສາມາດນຳໄປຈຳໜ່າຍໄດ້, ຕ້ອງເອົາໄປທຳລາຍຖິ້ມຕາມລະບຽບການທີ່ກ່ຽວຂ້ອງ.

ຜະລິດຕະພັນຊີ້ນ ຕ້ອງໄດ້ຜ່ານການຫຸ້ມຫໍ່ໃສ່ຖົງ, ກ່ອງ ຫຼື ພາຊະນະບັນຈຸ ທີ່ສະອາດ ແລະ ປອດເຊື້ອພະຍາດ ໂດຍຕິດສະຫຼາກ ຫຼື ເຄື່ອງໝາຍການຄ້າ (Logo ຫຼື Brand name) ສະເພາະຂອງໂຮງງານ ກ່ອນການຈຳໜ່າຍ.

**ມາດຕາ 15 ການເກັບຮັກສາ**

ການເກັບຮັກສາຜະລິດຕະພັນສັດ ຕ້ອງມີມາດຕະຖານ ດັ່ງນີ້:

1. ຫ້ອງເກັບຊີ້ນ ແລະ ຊີ້ນສ່ວນຂອງສັດ ຫຼື ຫ້ອງຮັກສາອຸນຫະພູມ ທີ່ມີຄວາມເຢັນຕ່ຳກວ່າ ຫຼື ເທົ່າກັບ 4 ອົງສາເຊ ເພື່ອລໍຖ້າຂົນສົ່ງ;

2. ພາຊະນະບັນຈຸຜະລິດຕະພັນ, ຕູ້ແຊ່, ຖົງຮັກສາຄວາມເຢັນ ແລະ ອຸປະກອນອື່ນ ຕ້ອງຮັບປະກັນຄວາມສະອາດ ແລະ ບໍ່ເປັນໝ້ຽງ.

**ມາດຕາ 16 ການຂົນສົ່ງ**

ການຂົນສົ່ງຜະລິດຕະພັນສັດຈາກໂຮງງານ ຕ້ອງມີລົດຂົນສົ່ງສະເພາະ ແລະ ມີມາດຕະຖານ ດັ່ງນີ້:

1. ກໍລະນີການຂົນສົ່ງໃຊ້ເວລາບໍ່ເກີນ 30 ນາທີ ຕ້ອງໃຊ້ລົດ ຫຼື ພາຊະນະບັນຈຸແບບປິດທີ່ສະອາດ, ບໍ່ເປັນໝ້ຽງ ແລະ ຮັກສາອຸນຫະພູມທີ່ມີຄວາມເຢັນ ຫຼື ບໍ່ເຢັນກໍ່ໄດ້;

2. ກໍລະນີການຂົນສົ່ງໃຊ້ເວລາໃນລະຫວ່າງ 30 ນາທີ ຫາ 120 ນາທີ ຕ້ອງໃຊ້ລົດ ແລະ ພາຊະນະບັນຈຸແບບປິດທີ່ສະອາດ, ບໍ່ເປັນໝ້ຽງ ແລະ ຮັກສາອຸນຫະພູມແຕ່ 0 ຫາ 4 ອົງສາເຊ;

3. ກໍລະນີການຂົນສົ່ງໃຊ້ເວລາເກີນກວ່າ 120 ນາທີຂຶ້ນໄປ ຕ້ອງໃຊ້ລົດ ແລະ ພາຊະນະບັນຈຸແບບປິດທີ່ສະອາດ, ບໍ່ເປັນໝ້ຽງ ແລະ ຮັກສາອຸນຫະພູມຕ່ຳກວ່າ 0 ອົງສາເຊ.

**ມາດຕາ 17 ພະນັກງານບໍລິຫານ ແລະ ວິຊາການສະເພາະດ້ານ**

ໂຮງງານຂ້າສັດ ຕ້ອງມີພະນັກງານບໍລິຫານ ແລະ ສັດຕະວະແພດ ຢ່າງໜ້ອຍໜຶ່ງຄົນ ປະຈຳຢູ່ໂຮງງານ, ຕ້ອງມີວິຊາການສະເພາະດ້ານ ທີ່ມີຄວາມຮູ້, ຜ່ານການຝຶກອົບຮົມ ຫຼື ມີປະສົບການກ່ຽວກັບການຂ້າ ຫຼື ຄົວ ຫຼື ຕັດແຕ່ງຊີ້ນ ແລະ ຊີ້ນສ່ວນຂອງສັດ ໃນໂຮງງານ. ພະນັກງານທຸກຄົນຕ້ອງ ມີສຸຂະພາບແຂງແຮງດີ, ໄດ້ຮັບການກວດກາສຸຂະພາບໃນແຕ່ລະປີ ຢ່າງເປັນປົກກະຕິ ແລະ ມີການຢັ້ງຢືນຈາກໂຮງໝໍຂອງລັດ ຫຼື ໂຮງໝໍທີ່ໄດ້ມາດຕະຖານ.

**ມາດຕາ 18 ຄວາມປອດໄພ ແລະ ສຸຂານາໄມໂຮງງານ**

ໂຮງງານຂ້າສັດ ຕ້ອງມີມາດຕະຖານຄວາມປອດໄພ ແລະ ສຸຂານາໄມ ຢູ່ພາຍໃນໂຮງງານ ດັ່ງນີ້:

1. ຕິດຕັ້ງລະບົບປ້ອງກັນອັກຄີໄພ ໃຫ້ພຽງພໍ ເປັນຕົ້ນ ລະບົບສັນຍານເຕືອນໄພ, ບັ້ງດັບເພີງ ຫຼື ລະບົບນ້ຳມອດໄຟທີ່ສາມາດນຳໃຊ້ໄດ້;

2. ຕິດຕັ້ງລະບົບອຸປະກອນຄວບຄຸມຄວາມປອດໄພຈາກໄຟຟ້າ ເປັນຕົ້ນ ອຸປະກອນຕັດໄຟຟ້າແບບອັດຕະໂນມັດ, ກົງຕັກຕັດໄຟຟ້າ, ລະບົບສາຍດິນ;

3. ລະບົບປ້ອງກັນອັນຕະລາຍຈາກເຄື່ອງຈັກ ເປັນຕົ້ນ ອຸປະກອນກັ້ນບັງ, ປ້າຍເຕືອນ ຫຼື ປ້າຍຫ້າມໃສ່ບ່ອນທີ່ມີຄວາມສ່ຽງທີ່ຈະເປັນອັນຕະລາຍ ພ້ອມທັງມີແຜນການບຳລຸງຮັກສາເຄື່ອງຈັກ ແລະ ອຸປະກອນເປັນປະຈຳ;

4. ທາງອອກສຸກເສີນຢ່າງໜ້ອຍສອງປ່ອງຂຶ້ນໄປ;

5. ພະນັກງານຂ້າ-ຄົວສັດ ຕ້ອງໃສ່ອຸປະກອນປ້ອງກັນອຸບປະຕິເຫດແຮງງານ ແລະ ພະຍາດອາຊີບ ເປັນຕົ້ນ ຜ້າປິດປາກ-ດັງ, ເກີບ, ໝວກ, ແວ່ນຕາ, ສົບມື ຂຶ້ນກັບແຕ່ລະຂອດງານ ຫຼື ຊຸດເຄື່ອງນຸ່ງທີ່ສະອາດ;

6. ຕ້ອງມີ ນ້ຳດື່ມ, ນ້ຳໃຊ້ ສະອາດ, ຕູ້ຢາປະຖົມພະຍາບານ, ຫ້ອງນ້ຳ ສະອາດ ແລະ ພຽງພໍ ຕໍ່ການນຳໃຊ້;

7. ສິ່ງອຳນວຍຄວາມສະດວກ ເປັນຕົ້ນ ຫ້ອງປ່ຽນເຄື່ອງ, ຫ້ອງອາຫານ, ສະຖານທີ່ພັກຜ່ອນ, ບ່ອນຈອດລົດ ແລະ ອື່ນໆ.

ມາດຕາ 19 ສິ່ງແວດລ້ອມໂຮງງານ

ການສ້າງຕັ້ງ ແລະ ການດຳເນີນກິດຈະການໂຮງງານຂ້າສັດ ຕ້ອງຮັບປະກັນການປົກປັກຮັກສາສິ່ງແວດລ້ອມ ແລະ ສັງຄົມ ໂດຍຕ້ອງອອກແບບ, ກໍ່ສ້າງ ແລະ ຕິດຕັ້ງລະບົບບຳບັດ ແລະ ກຳຈັດສິ່ງເສດເຫຼືອ ໃຫ້ໄດ້ຕາມມາດຕະຖານທີ່ກົດໝາຍ ແລະ ລະບຽບການກຳນົດໄວ້ ເປັນຕົ້ນ ກິ່ນເໝັນ, ນ້ຳເປື້ອນ, ນ້ຳເສຍຄຸນ, ມົນລະພິດທາງອາກາດ, ສິ່ງເສດເຫຼືອທຸກປະເພດ, ສຽງດັງ.

ມາດຕາ 20 ການສ້າງແຜນການເຄື່ອນໄຫວປະຈຳປີຂອງໂຮງງານ

ຜູ້ດຳເນີນກິດຈະການໂຮງງານຂ້າສັດ ຕ້ອງສ້າງແຜນການເຄື່ອນໄຫວປະຈຳປີ ແລະ ປະຈຳງວດ ຕາມແບບພິມ ອ ເຊັ່ນ: ແຜນການຜະລິດ, ແຜນການຈຳໜ່າຍ, ແຜນຄວາມຕ້ອງການວັດຖຸດິບປະຈຳປີ, ໃບຄິດໄລ່ລາຄາສຳເລັດຮູບຕໍ່ຫົວໜ່ວຍຜະລິດຕະພັນ, ກຳນົດໝາຍເສດຖະກິດ-ເຕັກນິກ ການສິ້ນເປືອງຕໍ່ຫົວໜ່ວຍຜະລິດຕະພັນ ແລະ ການສະຫຼຸບການນຳເຂົ້າວັດຖຸດິບ, ອາໄຫຼ່, ອຸປະກອນ, ຊິ້ນສ່ວນ, ເຄື່ອງຈັກອຸດສາຫະກຳ ແລ້ວນຳສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາ.

ຜູ້ດຳເນີນກິດຈະການໂຮງງານຂ້າສັດ ຕ້ອງສະຫຼຸບລາຍງານຂໍ້ມູນການເຄື່ອນໄຫວການຜະລິດຕົວຈິງຂອງໂຮງງານ ຕາມແຜນການເຄື່ອນໄຫວປະຈຳປີຂ້າງເທິງນີ້ ສົ່ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ເປັນແຕ່ລະງວດ, ປີ ຕາມທີ່ກຳນົດໄວ້ຢູ່ໃນຂໍ້ 7 ມາດຕາ 50 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013.

## ໝວດທີ 3
## ການປັບປຸງ ແລະ ດັດສົມໂຮງງານຂ້າສັດ

ມາດຕາ 21 ການປັບປຸງ ແລະ ດັດສົມໂຮງງານຂ້າສັດ

ໂຮງງານຂ້າສັດ ທຸກຂະໜາດ ຕ້ອງປັບປຸງ ແລະ ດັດສົມໂຮງງານ ຕາມເງື່ອນໄຂ ແລະ ມາດຕະຖານ ຕາມທີ່ໄດ້ກຳນົດໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້, ພ້ອມນີ້ຕ້ອງປະຕິບັດ ຄືດັ່ງນີ້:

1. ໄດ້ຮັບໃບຢັ້ງຢືນດຳເນີນກິດຈະການໂຮງງານ ຕາມຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານ ຈຶ່ງສາມາດເຄື່ອນໄຫວກິດຈະການໂຮງງານໄດ້;
2. ໂຮງງານ ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການມາກ່ອນ ໃຫ້ປະຕິບັດຕາມແຕ່ລະກໍລະນີ ດັ່ງນີ້:
   - 2.1 ປັບປຸງໂຮງງານໃຫ້ໄດ້ຕາມມາດຕະຖານທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍມີແຜນການປັບປຸງ ແລະ ກຳນົດເວລາ ແລ້ວສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາ ຮັບຮອງ ແລະ ຕິດຕາມກວດກາ ການປັບປຸງໂຮງງານດັ່ງກ່າວ.
   - 2.2 ພາຍຫຼັງປັບປຸງໂຮງງານສຳເລັດແລ້ວ ຕ້ອງສະເໜີຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຢັ້ງຢືນການປັບປຸງໂຮງງານ;
   - 2.3 ໂຮງງານທີ່ເຄື່ອນໄຫວບໍ່ຖືກຕ້ອງ ຕາມຈຸດປະສົງການອະນຸຍາດດຳເນີນກິດຈະການໂຮງງານ ຕ້ອງປິດກິດຈະການໂຮງງານ ແລະ ຮື້ຖອນທັງໝົດ;
   - 2.4 ໂຮງງານທີ່ຖືກຢຸດເຊົາຖາວອນ ຕ້ອງຢຸດເຊົາກິດຈະການຢ່າງເດັດຂາດ, ໃນກໍລະນີຫາກບໍ່ຢຸດເຊົາໃຫ້ປະຕິບັດມາດຕະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.
3. ໂຮງງານທີ່ຈະສ້າງຕັ້ງໃໝ່ ຕ້ອງປະຕິບັດຕາມມາດຕະຖານທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
4. ໂຮງງານທີ່ໄດ້ຮັບອະນຸຍາດດຳເນີນກິດຈະການຖືກຕ້ອງ ໃຫ້ເຕົ້າໂຮມກັນເປັນກຸ່ມ ຫຼື ສະມາຄົມໂຮງງານຂ້າສັດ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເຜີຍແຜ່, ແນະນຳ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ໂດຍສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ 15 ວັນ.

ຂໍ້ຕົກລົງສະບັບນີ້ປ່ຽນແທນຂໍ້ຕົກລົງ ວ່າດ້ວຍມາດຕະຖານໂຮງງານຂ້າສັດ ສະບັບເລກທີ 0942/ອຄ, ລົງວັນທີ 13 ພຶດສະພາ 2010.

ລັດຖະມົນຕີ

ກະຊວງອຸດສາຫະກຳແລະການຄ້າ

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ